ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 15.12.2015.

# ລັດຖະບັນຍັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍ ອັດຕາຄ່າຊັບພະຍາກອນທຳມະຊາດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມ ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012, ມາດຕາ 52 ຂໍ້ 06;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 016/ຄປຈ, ລົງວັນທີ 07 ສິງຫາ 2015 ແລະ ສະບັບເລກທີ 0381/ທສຊ, ລົງວັນທີ 30 ພະຈິກ 2015.

**ປະທານປະເທດ ອອກລັດຖະບັນຍັດ**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດອັດຕາຄ່າຊັບພະຍາກອນທຳມະຊາດ ເພື່ອຮັບປະກັນການເກັບຄ່າຊັບພະຍາກອນທຳມະຊາດ ໃຫ້ຖືກຕ້ອງ, ມີຄວາມເປັນເອກະພາບ ແລະມີປະສິດທິຜົນໃນຂອບເຂດທົ່ວປະເທດ ແນໃສ່ສ້າງລາຍຮັບເຂົ້າງົບປະມານແຫ່ງລັດ ຕາມກົດໝາຍ, ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ເຂັ້ມແຂງ.

**ມາດຕາ 2 ຄ່າຊັບພະຍາກອນທຳມະຊາດ**

ຄ່າຊັບພະຍາກອນທຳມະຊາດ ແມ່ນພັນທະດ້ານການເງິນ ຊຶ່ງບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທຳມະຊາດ ຊຶ່ງຕ້ອງເສຍໃຫ້ລັດ ຕາມອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດສະບັບນີ້.

**ມາດຕາ 3 ຫຼັກການ ການກຳນົດອັດຕາຄ່າຊັບພະຍາກອນທຳມະຊາດ**

ການກຳນົດອັດຕາຄ່າຊັບພະຍາກອນທຳມະຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ອີງໃສ່ລະດັບການຂະຫຍາຍຕົວຂອງພື້ນຖານການຜະລິດ, ເສດຖະກິດ ແລະ ນະໂຍບາຍທາງດ້ານເສດຖະກິດການເງິນຂອງລັດຖະບານ;
2. ຮັບປະກັນການພັດທະນາແບບຍືນຍົງ, ນຳໃຊ້ຊັບພະຍາກອນທຳມະຊາດແບບປະຢັດ ແລະ ຮັກສາໄວ້ຍ່າງຍາວນານ;
3. ກຳນົດເປັນເອກະພາບ ໃນອັດຕາດຽວກັນທົ່ວປະເທດ.

**ມາດຕາ 4 ຂອບເຂດການນຳໃຊ້ລັດຖະບັນຍັດ**

ລັດຖະບັນຍັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບ ຊັບພະຍາກອນແຮ່ທາດ, ຊັບພະຍາກອນເຄື່ອງປ່າຂອງດົງ ແລະ ຊັບພະຍາກອນນ້ຳ ຢູ່ ສປປ ລາວ.

ລັດຖະບັນຍັດສະບັບນີ້ ບໍ່ກວມເອົາປະເພດ ພືດ, ເຄື່ອງປ່າຂອງດົງ ທີ່ໄດ້ມາຈາກການເພາະປູກ ໂດຍ ຜູ້ປະກອບການ ຫລື ປະຊາຊົນ.

## ໝວດທີ 2
## ອັດຕາຄ່າຊັບພະຍາກອນທຳມະຊາດ

**ມາດຕາ 5 ອັດຕາຄ່າຊັບພະຍາກອນແຮ່ທາດ**

**ກ. ຊັບພະຍາກອນແຮ່ທາດ**

ຄ່າຊັບພະຍາກອນແຮ່ທາດ ໃຫ້ເກັບຕາມອັດຕາ ດັ່ງນີ້:

| ລ/ດ | ປະເພດແຮ່ທາດ | ອັດຕາສ່ວນຮ້ອຍ ຂອງມູນຄ່າຂາຍຜະລິດຕະພັນແຮ່ທາດທີ່ຂຸດຄົ້ນໄດ້ |
|---|---|---|
| 1 | ແກ້ວປະເສີດ ແລະ ຢົກ<br>- ເພັດ, ຣູບີ, ຊັບຟາຍ, ມໍລະກົດ;<br>- ຢົກ | 10 |
| 2 | ເຄິ່ງແກ້ວປະເສີດ | 7 |

| | | |
|---|---|---|
| | - มุก, อาเล็กຊັງໄຣດ;<br>- ອາເອໂຣອິດ, ໂຣໂດໄຣດ, ປີຣິກ, ເບຣິກ, ສະປີແນນ, ໂຕປາສ, ກິດໂສໄຣດ, ໂອປານ, ທູຣມາລິນ, ອາກັດ, ກາກເນັດ;<br>- ກວັດສ, ອາເມຕິສ | |
| 3 | ໂລຫະປະເສີດ<br>- ເງິນ, ຄຳ, ປລາຕິນ | 7 |
| 4 | ໂລຫະພື້ນຖານ (ໂລຫະທີ່ບໍ່ແມ່ນເຫລັກ)<br>- ທອງ, ຊືນ, ກົ່ວ, ສັງກະສີ, ອາລູມີນຽມ | 6 |
| 5 | ເຫຼັກ ແລະ ໂລຫະປະສົມເຫຼັກ<br>- ເຫຼັກ, ຕິຕານ, ມັງການ, ໂຄຼມ, ວານາດຽມ, ນີແກນ, ໂຄບານ, ໂມລິບແດນ, ຕັງສະແຕນ | 6 |
| 6 | ໂລຫະທີ່ມີໜ້ອຍ ແລະ ພົວພັນກັບອະໂລຫະ<br>- ອັງຕີມອນ, ອັກເຊນິກ, ເບຣີລຽມ, ແຄັດມຽມ, ບິສມຸດ, ແມັກນີຊຽມ, ບາຫຼອດ, ຣິດຽມ ແລະ ຊີລີນຽມ, ໂຄຣຸມບຽມ, ໄທທານຽມ, ເຊີໂກນຽມ. | 7 |
| 7 | ແຮ່ເອເວໂປໄຣຕ<br>- ຫີນກາວ, ອານຮີໄດຣ, ເກືອໂປຕັສ, ເກືອມັກເຍ | 4 |
| | - ເກືອກິນ | 2 |
| 8 | ແຮ່ທາດອຸດສາຫະກຳ<br>- ຟູລອໍໄຣຕ, ບາໄຣຕ, ຟົດຟໍໄຣຕ, ໄມກາ | 4 |
| 9 | ດິນ-ຫີນອຸດສາຫະກຳ<br>- ຫີນປູນ, ຫີນໂດໂລໄມຕ, ມາເຍໄຊຍ, ຫີນລາເຕຣິດ, ດິນໜຽວ, ດິນກາວແລງ, ຕູຟ, ອາສເບສໂຕສ, ຊາຍຜະລິດແກ້ວ, ຕານຄ, ອາລູໄນຕ, ຫີນແຮ່, ຫີນກຣາໄນຕ, ຫີນໄດໂອໄຣ, ຫີນກາບໂປຼ, ຫີນໄຣໂອໄຣຕ, ຫີນແຜ່ນ | 4 |
| 10 | ຫີນປະດັບ<br>- ຫີນການິດ, ຫີນອ່ອນ, ຫີນໄນ, ຫີນສະເລດ, ປາໂກໄດຕ | 5 |
| 11 | ຖ່ານຫີນ<br>- ລິກໄນ, ຊັບບີທູມີນັດ, ບີທູມີນັດ, ແອນຕຣາໄຊ | 6 |
| | - ຖ່ານຕົມ | 2 |
| | - ຫີນນ້ຳມັນ | 3 |
| 12 | ນ້ຳມັນ ແລະ ອາຍແກັດທຳມະຊາດ | ອີງຕາມການເຈລະຈາສັນຍາ |

**ຂ. ຊັບພະຍາກອນແຮ່ທາດ ຮັບໃຊ້ກິດຈະການກໍ່ສ້າງ**

ຄ່າຊັບພະຍາກອນແຮ່ທາດ ຮັບໃຊ້ກິດຈະການກໍ່ສ້າງ ໃຫ້ເກັບຕາມອັດຕາ ດັ່ງນີ້:

| ລ/ດ | ປະເພດຊັບພະຍາກອນ | ອັດຕາເກັບ | ຫົວໜ່ວຍ |
|---|---|---|---|
| 1 | ດິນດຳ, ດິນແດງ, ດິນໜຽວ | 3,000 ກີບ | ແມັດກ້ອນ |
| 2 | ຊາຍ | 4,000 ກີບ | ແມັດກ້ອນ |
| 3 | ຫີນແຮ່, ຫີນທາດ | 5,000 ກີບ | ແມັດກ້ອນ |
| 4 | ຫີນຜາ<br>- ຫີນໂດໂລໄມຕ<br>- ກຣາໄນຕ-ໄດໂອໄຣ<br>- ຫີນບາຊານ<br>- ຫີນຊາຍ | 7,000 ກີບ | ແມັດກ້ອນ |

ສຳລັບຄ່າຊັບພະຍາກອນທຳມະຊາດ ເພື່ອຮັບໃຊ້ໂຄງການໄຟຟ້ານ້ຳຕົກ ເປັນຕົ້ນ ຄ່າຊັບພະຍາກອນດິນ, ຫີນ ແລະ ຊາຍ ທີ່ຂຸດຄົ້ນໃນຂອບເຂດສຳປະທານໂຄງການໄຟຟ້ານ້ຳຕົກ ແລະ ນຳໃຊ້ເຂົ້າໃນໂຄງການດັ່ງກ່າວ ໃຫ້ຄິດໄລ່ລວມເປັນອັດຕາດຽວກັບຄ່າຊັບພະຍາກອນນ້ຳ ເພື່ອໂຄງການໄຟຟ້ານ້ຳຕົກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງລັດຖະບັນຍັດສະບັບນີ້, ສ່ວນຄ່າຊັບພະຍາກອນແຮ່ທາດອື່ນ ທີ່ບໍ່ຢູ່ໃນເຂດສຳປະທານ ແຕ່ໄດ້ນຳໃຊ້ເຂົ້າໃນໂຄງການໄຟຟ້ານ້ຳຕົກນັ້ນ ໃຫ້ເກັບຕາມອັດຕາທີ່ໄດ້ກຳນົດໄວ້ໃນມາດຕານີ້.

**ມາດຕາ 6 ອັດຕາຄ່າຊັບພະຍາກອນທຳມະຊາດເຄື່ອງປ່າຂອງດົງ**

ຄ່າຊັບພະຍາກອນທຳມະຊາດເຄື່ອງປ່າຂອງດົງ ໃຫ້ເກັບຕາມອັດຕາ ດັ່ງນີ້:

| ລ/ດ | ປະເພດເຄື່ອງປ່າຂອງດົງ | ອັດຕາສ່ວນຮ້ອຍຂອງມູນຄ່າຂາຍ |
|---|---|---|
| 1 | ຕົ້ນໄມ້ເກີດຢູ່ທຳມະຊາດໜ້າຕ້າງຂະໜາດນ້ອຍ 20 ຊັງຕີແມັດລົງມາ ທີ່ນຳມາໃຊ້ເປັນໄມ້ປະດັບ | 50 |
| 2 | ຊິ້ນສ່ວນໄມ້ເກດສະໜາ | 40 |
| 3 | ຊິ້ນສ່ວນ ໄມ້ຈັນຫອມ, ໄມ້ຈັນໃດ, ໄມ້ຈັນແດງ, ໄມ້ຈັນຂາວ | 30 |
| 4 | ເສັ້ນຫວາຍທູນ, ເສັ້ນຫວາຍນ້ອຍ | 30 |
| 5 | ຍອດຫວາຍ, ຍອດປຸ່ນ, ຍອດຕາວ | 30 |
| 6 | ເຄືອແຫ່ມ, ເຄືອຕຽງ, ເຄືອຕົບຕີ, ເຄືອເຂົາຮໍ, ເຄືອສະຄ່ານ | 30 |
| 7 | ຖ່ານດັງໄຟ | 20 |

| | | |
|---|---|---|
| 8 | ໄມ້ປ່ອງ, ໄມ້ລວງປຸກ | 15 |
| 9 | ແກ່ນຄູນ | 10 |
| 10 | ຢາງເກື້ອມ, ຢາງແປກ, ຢາງໄມ້ແດງ, ຢາງໄມ້ດູ່, ຢາງບົງ, ຢາງໄມ້ແຄນ, ນ້ຳມັນຍາງ; ນ້ຳມັນຍານ | 10 |
| 11 | ໝາກຈອງ, ໝາກຈອງບານ, ໝາກຕາວ, ໝາກແສງເບືອ, ໝາກຂາມແພບ, ໝາກແໜ່ງ, ໝາກກະເບົາ, ໝາກເກືອ, ໝາກຄອນແຄນ, ໝາກຄໍ້ສົ້ມ, ໝາກແຕກ, ໝາກເກື້ອມ, ໝາກຂາໄກ່, ໝາກທວາຍ, ໝາກຂ່າ, ໝາກກໍ່, ໝາກໂປງເປັ້ງ, ໝາກແຫຼະ, ໝາກສາມສິບ, ໝາກກ້າ | 10 |
| 12 | ເປືອກບົງ, ເປືອກເມືອກ, ເປືອກສຽດ, ເປືອກປໍສາ, ເປືອກຫີນ, ເປືອກແຄ, ເປືອກທາດ, ເປືອກສາມທາງ | 10 |
| 13 | ຢາຫົວ, ຫົວດູກເດືອ, ຫົວກະປຸກ, ຫົວກອຍ, ຫົວຂ່າ, ຫົວສາມສິບ, ຮາກອ່ຽນດ່ອນ, ຫົວຫານໃຈ, ຫົວສາມພັນຮູ, ຫົວມັນ | 10 |
| 14 | ດອກເຜີ້ງ | 30 |
| 15 | ໄມ້ຕົ້ວ, ໄມ້ກໍ່, ໄມ້ພືນ, ໄມ້ຄຳແບບ, ໄມ້ຫູ້ກຣິ້ວ | 10 |
| 16 | ໜໍ່ໄມ້ທຸກຊະນິດ, ເຫັດທຸກຊະນິດ | 10 |
| 17 | ນ້ຳຜຶ້ງ | 5 |
| 18 | ຜັກຊະນິດຕ່າງໆ | 4 |
| 19 | ດອກແຂມ, ໃບຊາປ່າ | 4 |
| 20 | ຂີ້ຊີ, ຂີ້ຄັ່ງ, ຂີ້ເຈຍ | 4 |
| 21 | ໂສມຜາ | 30 |
| 22 | ຫົວຂ່າຣິມສາມເມືອງ | 50 |

ສຳລັບເຄື່ອງປ່າຂອງດົງທີ່ບໍ່ນອນໃນຕາຕະລາງຂ້າງເທິງ ໃນເວລາປະຕິບັດຕົວຈິງຫາກເກີດມີ ໃຫ້ເກັບຕາມແຕ່ກໍລະນີ ຄື: ສຳລັບຊັບພະຍາກອນປະເພດທົ່ວໄປ ໃຫ້ເກັບສິບສ່ວນຮ້ອຍ (10%) ຂອງມູນຄ່າຂາຍ; ສຳລັບຊັບພະຍາກອນປະເພດຫວງຫ້າມ ແລະ ໃກ້ຈະສູນພັນ ໃຫ້ເກັບຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າຂາຍ.

ການເກັບອັດຕາຄ່າຊັບພະຍາກອນທຳມະຊາດ ປະເພດເຄື່ອງປ່າຂອງດົງ ໃຫ້ເກັບເວລາເຄື່ອນຍ້າຍ ຫຼື ສົ່ງອອກໄປຕ່າງປະເທດ.

ມາດຕາ 7 ອັດຕາຄ່າຊັບພະຍາກອນນ້ຳທຳມະຊາດ

ກ. ຊັບພະຍາກອນນ້ຳທຳມະຊາດ ເພື່ອຮັບໃຊ້ໂຄງການເຂື່ອນໄຟຟ້ານ້ຳຕົກ

ຄ່າຊັບພະຍາກອນນ້ຳ ເພື່ອຮັບໃຊ້ໂຄງການເຂື່ອນໄຟຟ້ານ້ຳຕົກ ໃຫ້ເກັບຕາມອັດຕາ ດັ່ງນີ້:

| ລ/ດ | ປະເພດການນຳໃຊ້ຊັບພະຍາກອນນ້ຳ | ອັດຕາສ່ວນຮ້ອຍຂອງລາຍຮັບທັງໝົດ |
|---|---|---|
| 1 | ໂຄງການເຂື່ອນໄຟຟ້ານ້ຳຕົກ ທີ່ມີການສົ່ງອອກຂາຍໄປຕ່າງປະເທດ | 5 ຂຶ້ນໄປ |
| 2 | ໂຄງການເຂື່ອນໄຟຟ້ານ້ຳຕົກ ທີ່ມີການສະໜອງໄຟຟ້າໃຫ້ແກ່ພາຍໃນປະເທດສະເພາະ ແລະມີກຳລັງຕິດຕັ້ງຫລາຍກວ່າ 15 ເມກະວັດ | |
| 3 | ໂຄງການເຂື່ອນໄຟຟ້ານ້ຳຕົກທີ່ມີການສະໜອງໄຟຟ້າໃຫ້ແກ່ພາຍໃນປະເທດສະເພາະ ແລະມີກຳລັງຕິດຕັ້ງໜ້ອຍກວ່າ ຫຼືເທົ່າກັບ 15 ເມກະວັດ | 5 |

ນອກຈາກໂຄງການເຂື່ອນໄຟຟ້ານ້ຳຕົກແລ້ວ ຖ້າມີການພັດທະນາໂຄງການຜະລິດໄຟຟ້າອື່ນ ແມ່ນໃຫ້ເກັບຄ່າຊັບພະຍາກອນທຳມະຊາດ ຕາມອັດຕາທີ່ໄດ້ກຳນົດໄວ້ໃນມາດຕານີ້

ການເກັບອັດຕາຄ່າຊັບພະຍາກອນນ້ຳທຳມະຊາດ ທີ່ໄດ້ກຳນົດໄວ້ໃນຕາຕະລາງເທິງນີ້ ໃຫ້ເກັບຕາມລາຍຮັບທັງໝົດ ຂອງການຂາຍໄຟຟ້າກ່ອນຫັກຄ່າໃຊ້ຈ່າຍຕ່າງໆ, ສ່ວນອັດຕາການເກັບລະອຽດ ແມ່ນໃຫ້ກຳນົດໄວ້ໃນສັນຍາສຳປະທານ.

**ຂ. ຊັບພະຍາກອນນ້ຳທຳມະຊາດ ສຳລັບແຕ່ລະກິດຈະການຜະລິດ ແລະການບໍລິການ**

ອັດຕາເກັບຄ່າຊັບພະຍາກອນນ້ຳທຳມະຊາດ ສຳລັບແຕ່ລະກິດຈະການຜະລິດ ແລະການບໍລິການ ໃຫ້ເກັບຕາມອັດຕາ ດັ່ງນີ້:

| ລ/ດ | ປະເພດນຳໃຊ້ | ອັດຕາການເກັບກີບຕໍ່ແມັດກ້ອນ |
|---|---|---|
| 1 | ການນຳໃຊ້ນ້ຳທຳມະຊາດ ເຂົ້າໃນກິດຈະການຜະລິດອຸດສາຫະກຳ | 5 |
| 2 | ການນຳໃຊ້ນ້ຳທຳມະຊາດ ເຂົ້າໃນກິດຈະການ ບໍ່ແຮ່ | 10 |
| 3 | ການນຳໃຊ້ນ້ຳທຳມະຊາດ ໃນກິດຈະການທ່ອງທ່ຽວ ແລະກິລາ ເຊັ່ນ ລີສອດ, ໂຮງແຮມ, ບ້ານພັກ, ຮ້ານອາຫານ ແລະກິດຈະການບໍລິການກິລາຕ່າງໆ | 5 |
| 4 | ການນຳໃຊ້ນ້ຳທຳມະຊາດ ເຂົ້າໃນການຜະລິດນ້ຳປະປາ | 5 |

## ໝວດທີ 3
## ການເກັບຄ່າຊັບພະຍາກອນທຳມະຊາດ

**ມາດຕາ 8 ການເກັບຄ່າຊັບພະຍາກອນທຳມະຊາດ**

ຂະແໜງການການເງິນ ເປັນຜູ້ຮັບຜິດຊອບເກັບຄ່າຊັບພະຍາກອນທຳມະຊາດ ແລະ ລາຍຮັບອື່ນ ລວມທັງຄ່າປັບໃໝ ທີ່ພົວພັນກັບຊັບພະຍາກອນທຳມະຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 9 ວິທີການຄິດໄລ່ຄ່າຊັບພະຍາກອນທຳມະຊາດ**

ການຄິດໄລ່ຄ່າຊັບພະຍາກອນທຳມະຊາດ ໃຫ້ປະຕິບັດຕາມສອງວິທີ ຄື:

1. ຄິດໄລ່ດ້ວຍການເອົາມູນຄ່າລາຄາຂາຍຕົວຈິງ ຄູນໃຫ້ອັດຕາສ່ວນຮ້ອຍ ຂອງຊະນິດຊັບພະຍາກອນທຳມະຊາດ ທີ່ຂາຍອອກ.
2. ຄິດໄລ່ຕາມປະລິມານຊັບພະຍາກອນທຳມະຊາດ ທີ່ຂຸດຄົ້ນມາໄດ້ ເພື່ອຂາຍ ຫຼື ນຳໃຊ້ ຄູນກັບອັດຕາມູນຄ່າເປັນເງິນ ຕາມທີ່ກຳນົດໄວ້ໃນລັດຖະບັນຍັດສະບັບນີ້.

## ໝວດທີ 4
## ບົດບັດຍັດສຸດທ້າຍ

**ມາດຕາ 10 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 11 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຜົນປະໂຫຍດຂອງຜູ້ດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທຳມະຊາດ ທີ່ໄດ້ຮັບພາຍໃຕ້ລະບຽບກົດໝາຍ ຫຼື ສັນຍາ ທີ່ໄດ້ເຊັນກັບລັດກ່ອນ ລັດຖະບັນຍັດສະບັບນີ້ ແມ່ນໃຫ້ປະຕິບັດຕາມສັນຍາທີ່ໄດ້ເຊັນນັ້ນ. ໃນກໍລະນີ ທີ່ຜູ້ດຳເນີນທຸລະກິດກ່ຽວກັບຊັບພະຍາກອນທຳມະຊາດດັ່ງກ່າວ ຫາກມີຈຸດປະສົງຕ້ອງການຮັບນະໂຍບາຍຕາມລັດຖະບັນຍັດສະບັບນີ້ ກໍມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ແລ້ວຂະແໜງການດັ່ງກ່າວ ກໍຈະແຈ້ງໃຫ້ຜູ້ດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນທຳມະຊາດ ປະຕິບັດໄດ້ຕາມກົດໝາຍ ແລະ ລະບຽບການ.

ຂໍ້ກຳນົດ ຫຼື ບົດບັນຍັດໃດ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານປະເທດແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ